ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ: 0392 /ກງ

ນະຄອນຫຼວງວຽງຈັນ, ວັນທີ: 07 ກຸມພາ 2023

# ແຈ້ງການ

ເຖິງ: ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2022 (AHTN2022)

- ອີງຕາມ ກົດໝາຍ ວ່າດ້ວຍພາສີ ສະບັບປັບປຸງ ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 05/ນຍ, ລົງວັນທີ 16 ມັງກອນ 2023 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸ້ນປີ 2022 (AHTN 2022);
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ໜັງສືລາຍງານຂອງກົມພາສີ ສະບັບເລກທີ 00542/ກພສ, ລົງວັນທີ 24 ມັງກອນ 2023.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍເນື້ອໃນຂອງ ດຳລັດວ່າດ້ວຍການປະກາດໃຊ້ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸ້ນປີ 2022 (ASEAN Harmonized Tarif Nomenclature – AHTN 2022) ໃຫ້ສອດຄ່ອງກັບລະບຽບການສາກົນແນໃສ່ເປັນການອຳນວຍຄວາມສະດວກທາງດ້ານການຄ້າ ດ້ວຍການຮັບປະກັນຄວາມຖືກຕ້ອງ ຊັດເຈນ ແລະ ເປັນເອກະພາບກັນໃນການຈັດລະຫັດສິນຄ້າ, ເຄື່ອງຂອງ ໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຫຼັກການສາກົນ.

ກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ສາລະບານສິນຄ້າລະບົບເອກະພາບ ອາຊຽນ ລຸ້ນປີ 2022 (AHTN 2022) ເພື່ອປ່ຽນແທນສາລະບານສິນຄ້າລະບົບເອກະພາບ ຂອງອາຊຽນ ລຸ້ນປີ 2017 (AHTN 2017) ທີ່ ປະກາດໃຊ້ໂດຍ ດຳລັດ ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018;
2. ສາລະບານສິນຄ້າລະບົບເອກະພາບ ອາຊຽນ ລຸ້ນປີ 2022 (AHTN 2022) ປະກອບມີ 21 ພາກ, 97 ໝວດ, ມີທັງໝົດ 11.414 ລະຫັດ;
3. ມອບໃຫ້ກົມພາສີອອກບົດແນະນຳລະອຽດ ກ່ຽວກັບການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບ ອາຊຽນ ລຸ້ນປີ 2022 (AHTN 2022) ເພື່ອພ້ອມທັງຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ພາສີ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ ແລະ ເຂົ້າໃຈ;
4. ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2022 (AHTN 2022) ມີຜົນບັງຄັບໃຊ້ນັບແຕ່ ວັນທີ 01 ມີນາ 2023 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີ

ບຸນປອນ ວັນນະຈິດ